**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ນາຍົກລັດຖະມົນຕີ** **ເລກທີ 091 /ນ.ຍ**

# ດຳລັດ

# ຂອງນາຍົກລັດຖະມົນຕີ

## ວ່າດ້ວຍການຍ້ອງຍໍຜົນງານໃນການຢຸດຕິການຖາງປ່າ ເຮັດໄຮ່ແບບເລື່ອນລອຍຢູ່ເມືອງປາກລາຍ.

- ອີງໃສ່ກົດໝາຍວ່າດ້ວຍລັດຖະບານແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ ສະບັບເລກທີ 02 / ສພຊ, ລົງວັນທີ 06 ພຶດສະພາ 2003.
- ອີງຕາມການສະເໜີຂອງ ແຂວງໄຊຍະບູລີ ສະບັບເລກທີ 111 / ຈຂ, ລົງວັນທີ 25 / 1 / 2010.

**ນາຍົກລັດຖະມົນຕີ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກດຳລັດ:**

**ມາດຕາ 1** : ມອບໃບຍ້ອງຍໍລັດຖະບານ ໃຫ້ຈຳນວນ 51 ທ່ານ ແລະ 34 ກົມກອງ ທີ່ມີຜົນງານດີເດັ່ນ ປະກອບສ່ວນເຂົ້າໃນຂະບວນການຢຸດຕິການຖາງປ່າເຮັດໄຮ່ແບບເລື່ອນລອຍ ສາມາດ ເຮັດໃຫ້ປະຊາຊົນຢູ່ເມືອງປາກລາຍ, ແຂວງໄຊຍະບູລີຫັນລົງມາທຳການຜະລິດແບບຄົງທີ່, ໝັ້ນທ່ຽງ ແລະ ເປັນເມືອງທຳອິດທີ່ສາມາດຢຸດຕິການຖາງປ່າເຮັດໄຮ່ແບບເລື່ອນລອຍໄດ້ ຮັບຜົນສຳເລັດຢ່າງຈົບງາມ.

**ມາດຕາ2** : ມອບໃຫ້ທ່ານເຈົ້າແຂວງ, ແຂວງຊຍະບູລີ ຊີ້ນຳ ຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະ ສົມ ກຽດ.

**ມາດຕາ 3** : ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນະຄອນຫຼວງວຽງຈັນ, ວັນທີ 07/04/2010

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ນາຍົກລັດຖະມົນຕີ

ບົວສອນ ບຸບຜາວັນ